**ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ**

**ນຳເອົາຄວາມຮູ້ດ້ານກົດໝາຍຄຸ້ມຄອງເງິນຕາຕ່າງປະເທດລົງເຖິງປະຊາຊົນ ກຸ່ມບ້ານເລາະລຽບຊາຍແດນລາວ-ໄທ**

**ເມືອງສອງຄອນ ແລະ ເມືອງໄຊພູທອງ ແຂວງສະຫວັນນະເຂດ**

=========================

ໃນລະຫວ່າງວັນທີ 22-28/2/2017 ສາຂາທະນາຄານແຫ່ງ ສປປ ລາວ ໂດຍສົມທົບກັບຫ້ອງວ່າການປົກຄອງເມືອງ ໄດ້ມີການລົງເຄື່ອນໄຫວເຜີຍແຜ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ສະບັບລົງວັນທີ 22/12/2014 ໃຫ້ບັນດາກຸ່ມບ້ານທີ່ຕັ້ງຢູ່ເລາະລຽບຕາມຊາຍແດນ ຊຶ່ງເປັນບ້ານທີ່ນອນຢູ່ໃນເປົ້າໝາຍຂອງເມືອງ ເປັນບ້ານທີ່ມີການນຳໃຊ້ເງິນຕາຕ່າງປະເທດເປັນຫຼັກ ປະກອບມີ 6 ກຸ່ມບ້ານ ລວມມີທັງໝົດ 32 ບ້ານທີ່ຂຶ້ນກັບ ເມືອງ ສອງຄອນ ແລະ ເມືອງໄຊພູທອງ ຊຶ່ງລາຍລະອຽດການເຄື່ອນໄຫວມີດັ່ງລຸ່ມນີ້:

**<u>ເມືອງ ສອງຄອນ:</u>**

ວັນທີ 22/2/2017 ລົງເຜີຍແຜ່ຢູ່ຫ້ອງການກຸ່ມບ້ານເຊບັ້ງຫຽງ ປະກອບມີ 8 ບ້ານຄື: ບ້ານເຊບັ້ງຫຽງ, ແກ້ງຕະງານ, ໂນນເຕົາຖ່ານ, ໝີ້ຢ້ຽມ, ໜອງຂອນ, ໂຄກກ່ອງ, ຫີນຄອກ ແລະ ບ້ານນາອຸດົມ.

ວັນທີ 23/2/2017 ລົງເຜີຍແຜ່ຢູ່ກຸ່ມບ້ານສະບູໄຊ ປະກອບມີ 6 ບ້ານຄື: ບ້ານສະບູໄຊ, ທ່າເດື່ອ, ນາໂພ, ທ່າປະຊຸມ, ໜອງເດີ່ນທ່າ ແລະ ບ້ານລາດນາດີ. ພ້ອມດຽວກັນກໍ່ໄດ້ລົງເຜີຍແຜ່ຢູ່ ກຸ່ມບ້ານນາຍູງ ປະກອບມີ 3 ບ້ານຄື: ບ້ານນາຍູງ, ໜອງແດງ ແລະ ບ້ານຄືມສະຫວ່າງ.

ວັນທີ 24/2/2017 ລົງເຜີຍແຜ່ຢູ່ກຸ່ມບ້ານທີກຸ່ມບ້ານໜອງບົວທ່າ ປະກອບມີ 7 ບ້ານຄື: ບ້ານໜອງບົວທ່າ, ໜອງວັດ, ໜອງອີເຫຼືອງ, ແກ້ງຫີນສູງ, ນາປົ່ງ, ໜອງເມັກ ແລະ ບ້ານນາຄູ.

**<u>ເມືອງໄຊພູທອງ:</u>**

ວັນທີ 27/2/2017 ລົງເຜີຍແຜ່ຢູ່ກຸ່ມບ້ານນາພານ ປະກອບມີ 4 ບ້ານຄື: ບ້ານທ່າດ່ານ, ນາພານ, ຄັນທ່າຈານ ແລະ ບ້ານດອນຫວາຍ.

ວັນທີ 28/2/2017 ລົງເຜີຍແຜ່ຢູ່ ກຸ່ມບ້ານທ່າໂພ ປະກອບມີ 4 ບ້ານຄື: ບ້ານທ່າໂພ, ຫົວຫາດ, ສົມສະອາດ ແລະ ບ້ານບຸ່ງນາດີ.

ຜູ່ເຂົ້າຮ່ວມກອງປະຊຸມ ປະກອບມີ ບັນດາອຳນາດການປົກຄອງຂັ້ນບ້ານທີ່ຂຶ້ນກັບກຸ່ມ, ອົງການຈັດຕັ້ງມະຫາຊົນພາຍໃນບ້ານ, ຫົວໜ້າໜ່ວຍ, ພາກສ່ວນຫົວໜ່ວຍທຸລະກິດຫ້າງຮ້ານ ແລະ ປະຊາຊົນພາຍໃນແຕ່ລະບ້ານ ແລະ ພະນັກງານວິຊາການຈຳນວນໜຶ່ງທີ່ນອນໃນຄະນະຊີ້ນຳລວມ ແລະ ອະນຸກຳມະການຊ່ວຍວຽກລວມທັງໝົດມີຈຳນວນ 419 ທ່ານ, ຍິງ 93 ທ່ານ.





ວາລະໃນການຈັດກອງປະຊຸມ ໃນແຕ່ລະຈຸດແມ່ນໄດ້ເລີ່ມແຕ່ເວລາ 8:30 ເຊົ້າ ໂດຍແມ່ນທ່ານເລຂາໜ່ວຍພັກແຕ່ລະກຸ່ມບ້ານໃຫ້ກຽດເປັນປະທານກອງປະຊຸມ. ຊຶ່ງທຳອິດປະທານໄດ້ກ່າວຕ້ອນຮັບ ແລະ ນຳສະເໜີເນື້ອໃນ, ຈຸດປະສົງໃນການລົງເຜີຍແຜ່ຕໍ່ຜູ້ເຂົ້າຮ່ວມກອງປະຊຸມ ໂດຍຮຽກຮ້ອງໃຫ້ມີຄວາມເອົາໃຈໃສ່ຕິດຕາມຮັບຟັງ ແລະ ສະເໜີຖາມບັນຫາທີ່ຍັງບໍ່ລະອຽດຈະແຈ້ງ ຫຼື ຂໍ້ຂ້ອງໃຈພາຍຫຼັງທີ່ການເຜີຍແຜ່ສິ້ນສຸດ. ຈາກນັ້ນ, ພະນັກງານສາຂາທະນາຄານແຫ່ງ ສປປ ລາວ ຂຶ້ນເຜີຍແຜ່ກົດໝາຍຄຸ້ມຄອງເງິນຕາຕ່າງປະເທດ, ຂໍ້ກຳນົດ ແລະ ລະບຽບໃນການສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ວິທີການຮັກສາການນຳໃຊ້ເງິນກີບ ແລະ ຄວາມຮູ້ພື້ນຖານໃນການຈຳແນກເງິນກີບແທ້ ແລະ ເງິນກີບປອມ ໃຫ້ຜູ່ເຂົ້າຮ່ວມກອງປະຊຸມຮັບຮູ້ ແລະ ເຂົ້າໃຈ ເຖິງເນື້ອໃນການລົງເຜີຍແຜ່ ພ້ອມທັງຫັນປ່ຽນພຶດຕິກຳການນຳໃຊ້ເງິນຕາຕ່າງປະເທດໃຫ້ນັບມື້ນັບຫຼຸດລົງ ແລະ ຫັນມາເຫັນຄວາມສຳຄັນຂອງຄຸນຄ່າເງິນກີບ ແລະ ນຳໃຊ້ເງິນກີບໃຫ້ນັບມື້ຫຼາຍຂຶ້ນເທື່ອລະກ້າວ. ຜ່ານການເຜີຍແຜ່ເນື້ອໃນເອກະສານເຫັນໄດ້ວ່າຜູ່ເຂົ້າຮ່ວມກອງປະຊຸ່ມສ່ວນໃຫຍ່ໃຫ້ຄວາມສົນໃຈ ແລະ ກຳໄດ້ໃນຫຼາຍບັນຫາ ແລະ ມີບາງທ່ານໄດ້ຊັກຖາມຂໍ້ຂ້ອງໃຈ. ຈາກນັ້ນ, ພະນັກງານ ສາຂາທະນາຄານແຫ່ງ ສປປ ລາວ ກໍ່ໄດ້ຕອບຄຳຖາມ ແລະ ແກ້ຂໍ້ຂ້ອງໃຈໃຫ້ກັບຜູ່ເຂົ້າຮ່ວມຮັບຟັງຢ່າງກົງໄປກົງມາ ແລະ ສະຫຼຸບສັງລວມຄືນແຕ່ລະບັນຫາ.





ທ້າຍສຸດ, ເພື່ອເຮັດໃຫ້ກອງປະຊຸມມີຄວາມໝາຍຄວາມສຳຄັນທີ່ເຕັມໄປດ້ວຍເນື້ອໃນອັນອຸດົມສົມບູນປະທານກອງປະຊຸມກໍ່ໄດ້ມີຄຳເຫັນໂອ້ລົມ ແລະ ຊີ້ທິດຄືນໃຫ້ປະຊາຊົນ, ເພື່ອຮັບຮູ້ ແລະ ເຂົ້າໃຈ ພ້ອມທັງໃຫ້ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມໄປເຜີຍແຜ່ຕໍ່ໃຫ້ປະຊາຊົນພາຍໃນແຕ່ລະບ້ານຂອງຕົນຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ.   ນອກນັ້ນ, ສາຂາທະນາຄານແຫ່ງ ສປປ ລາວ ກໍ່ໄດ້ມອບປ້າຍຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ, ເອກະສານໃນການລົງເຜີຍແຜ່, ປຶ້ມປະຫວັດການນຳໃຊ້ເງິນກີບຈຳນວນ 10 ຫົວ ແລະ USB ຈຳນວນ 38 ອັນ ໃຫ້ຄະນະເລຂາກຸ່ມບ້ານ, ເລຂາພັກແຕ່ລະບ້ານ.






**ຂ່າວໂດຍ: ສີລິພອນ ຄຳສີດາ**

*ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ*